26

ສຳນັກງານ ຄຄຊ
ເລກທີ 0401
ວັນທີ 24 MAY 2016
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພາສີ ພີມມະກອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ທະນາຄານແຫ່ງ ສ.ປ.ປ.ລາວ
ເລກທີ: 951
ວັນທີ: 23.5.2016
ໂທລະສັບ: 243710

ເລກທີ 703/ຫສນຍ.ກລຂ

ນະຄອນຫຼວງວຽງຈັນ,ວັນທີ 19.5.2016

## ແຈ້ງການ

ຮຽນ: - ບັນດາທ່ານລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ.
- ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ.

ເລື່ອງ: ໃຫ້ຢຸດເຊົາການອວ່າຍເງິນໂຄງການທີ່ບໍ່ຖືກຕ້ອງ ໃຫ້ບັນດາບໍລິສັດ ເພື່ອອ່ວາຍໃສ່ໂຄງການອື່ນ.

- ອີງຕາມເອກະສານສະເໜີ ສະບັບເລກທີ 210/ອກລ, ລົງວັນທີ 29 ເມສາ 2016 ຂອງອົງການກວດກາລັດຖະບານ.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳມາຍັງທ່ານ ຊາບດັ່ງນີ້ :

" ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ຢຸດເຊົາການອ່ວາຍເງິນໂຄງການທີ່ບໍລິສັດໄດ້ຮັບຈາກໂຄງການບໍ່ມີຕົວຕົນ, ໂຄງການບໍ່ໄດ້ຈັດຕັ້ງປະຕິບັດສຳເລັດຕາມສັນຍາ, ໂຄງການຈ່າຍເງິນຊ້ຳຊ້ອນ, ຈ່າຍເງິນເກີນບໍລິມາດວຽກເພື່ອອ່ວາຍໃສ່ໂຄງການອື່ນ ຖ້າຫາກແຂວງໃດ ໄດ້ເຊັນອະນຸມັດອ່ວາຍເງິນທີ່ບໍ່ຖືກຕ້ອງໃຫ້ບັນດາບໍລິສັດແລ້ວ ກໍ່ໃຫ້ເກັບກູ້ເງິນດັ່ງກ່າວຄືນໃຫ້ລັດຖະບານ. ພ້ອມກັນນີ້, ກໍ່ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກແກ່ຄະນະສືບສວນ-ສອບສວນໃນເວລາລົງໄປພົວພັນວຽກງານຕ່າງໆດ້ວຍ ".

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ບ່ອນນຳສົ່ງ :

| | |
|---|---|
| - ທ່ານນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ຫ້ອງວ່າການສະພາແຫ່ງຊາດ | 01 ສະບັບ |
| - ເກັບມ້ຽນ | 08 ສະບັບ |

ສຳນັກງານນາຍົກລັດຖະມົນຕີ
ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ເພັດ ພົມພິພັກ